**ຜົນການສົນທະນາ ໃນກຸ່ມທີ 1**
**ຄັ້ງວັນທີ 14 ພະຈິກ 2024 ທີ່ ຫໍປະຊຸມແຫ່ງຊາດ**

**ໂດຍ: ທ່ານ ພູວົງ ກິດຕະວົງ, ຮອງລັດຖະມົນຕີ ກະຊວງການເງິນ**

**ຮຽນ:**

- **ທ່ານ ປອ. ເພັດ ພົມພິພັກ ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ, ປະທານກອງປະຊຸມ ທີ່ເຄົາລົບ ແລະ ນັບຖືຢ່າງສູງ;**
- **ທ່ານ ບັກໂຮເດຍ ເບີຄະນ໋ອຟ, ຜູ້ປະສານງານອົງການສະຫະປະຊາຊາດ ປະຈຳ ສປປ ລາວ ທີ່ນັບຖື;**
- **ບັນດາທ່ານ ລັດຖະມົນຕີ, ຮອງລັດຖະມົນຕີ ທີ່ເຄົາລົບ ແລະ ນັບຖື;**
- **ບັນດາທູຕານຸທູດ, ຜູ້ຕາງໜ້າອົງການຈັດຕັ້ງສາກົນ ແລະ ບັນດາຄູ່ຮ່ວມພັດທະນາ ທີ່ນັບຖື;**
- **ບັນດາແຂກທ່ານຍິງ, ທ່ານຊາຍ ທີ່ນັບຖື ແລະ ຮັກແພງ.**

ຂ້າພະເຈົ້າ ຕາງໜ້າຂໍລາຍງານຜົນການສົນທະນາຂອງກຸ່ມທີ 1 ກ່ຽວກັບ ຄວາມຍືນຍົງດ້ານເສດຖະກິດ ແລະ ການສະໜອງທຶນທີ່ຍືນຍົງ ສໍາລັບບູລິມະສິດ ຂອງການພັດທະນາ ເຊິ່ງເຫັນວ່າເປັນການສົນທະນາ ທີ່ເປັນປະໂຫຍດ ແລະ ມີຫຼາກຫຼາຍຄໍາເຫັນທີ່ຕິດພັນກັບບັນດາມາດຕະການ ທີ່ໄດ້ຈັດຕັ້ງປະຕິບັດຜ່ານມາ ແລະ ທິດທາງໃນຕໍ່ໜ້າ ໃນການຈັດຕັ້ງປະຕິບັດເສດຖະກິດ-ສັງຄົມແຫ່ງຊາດ ເຊິ່ງສາມາດສັງລວມໄດ້ 3 ດັ່ງນີ້:

1) **ສິ່ງທ້າທາຍທີ່ສໍາຄັນ:**

- ສະພາບເສດຖະກິດພາຍໃນ ແລະ ພາຍນອກ ທີ່ສົ່ງຜົນກະທົບຕໍ່ການຄຸ້ມຄອງເສດຖະກິດມະຫາພາກ
- ການລົງທຶນໃນການພັດທະນາຊັບພະຍາກອນມະນຸດ ທີ່ຍັງບໍ່ທັນພຽງພໍ.

2) **ຄໍາແນະນໍາ ແລະ ທິດທາງໃນຕໍ່ໜ້າ:**

- ສຸມໃສ່ການເຕີບໂຕທີ່ຍືນຍົງ ແລະ ສີຂຽວ ດ້ວຍການປະສານສົມທົບທີ່ເຂັ້ມແຂງກວ່າເກົ່າ ໂດຍການມີສ່ວນຮ່ວມ ຂອງພາກເອກະຊົນ.

3) **ແຜນສະເພາະໜ້າ:**

- ສຸມໃສ່ການສ້າງຄວາມເຂັ້ມແຂງຂອດການປະສານງານ ດ້ານນະໂຍບາຍ ລະຫວ່າງ ບັນດາກະຊວງຂະແໜງການ ເພື່ອຮັບປະກັນປະສິດທິຜົນ ຂອງບັນດາໂຄງການລົງທຶນ.
- ການຜະລິດພາຍໃນທີ່ມີຈຸດສຸມ ໃນອຸດສາຫະກໍາສ້າງມູນຄ່າເພີ່ມ, ຕົວຢ່າງ: ຂະແໜງການປຸງແຕ່ງກະສິກໍາ ແລະ ການບໍລິການ.
- ກໍານົດມາດຕະການສໍາລັບການພັດທະນາ ໂດຍສະເພາະ ຍຸດທະສາດຂອງລັດຖະບານ ສໍາລັບການສະໜອງທຶນໃຫ້ແກ່ຂະແໜງສັງຄົມ ແລະ ການເຕີບໂຕສີຂຽວ.
- ປັບປຸງສະພາບແວດລ້ອມ ສົ່ງເສີມການລົງທຶນ ຂອງພາກເອກະຊົນ ລວມທັງການຫັນເປັນດີຈີຕອນ ສໍາລັບການມີສ່ວນຮ່ວມ ທີ່ມີຄວາມເຂັ້ມແຂງຫຼາຍຂຶ້ນ.

- **ດ້ານນະໂຍບາຍການເງິນ:**
  - ການຫັນເປັນທັນສະໄໝໃນການຄຸ້ມຄອງລາຍຮັບ, ອັດຊ່ອງຫວ່າງການຮົ່ວໄຫຼ, ການຂະຫຍາຍຖານອາກອນ (ອາກອນສຸຂະພາບ, ອາກອນຊົມໃຊ້ສຳລັບນ້ຳມັນເຊື້ອໄຟ) ແລະ ອາກອນທີ່ບໍ່ມຊ້ອນອື່ນໆ.
  - ພາກລາຍຈ່າຍ ແມ່ນຈັດລຽງບູລິມະສິດໃນຂະແໜງການສັງຄົມ ແລະ ປັບປຸງປະສິດທິພາບຂອງລາຍຈ່າຍ.
  - ຄຸ້ມຄອງໜີ້ສິນ: ເນັ້ນການກູ້ຢືມພາຍໃນ ເພື່ອຫຼຸດຜ່ອນຄວາມກົດດັນຕໍ່ໜີ້ສິນຕ່າງປະເທດ.
  - ປັບປຸງການເຊື່ອມສານ ລະຫວ່າງ ການວາງແຜນ ແລະ ງົບປະມານ ແລະ ຂອບດ້ານການວາງແຜນມະຫາພາກດ້ານການເງິນ.
- **ດ້ານນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ:**
  - ສືບຕໍ່ຮັດກຸມ ເພື່ອຫຼຸດຜ່ອນຄວາມກົດດັນ ຕໍ່ເງິນເຟີ້ ແລະ ອັດຕາແລກປ່ຽນ.
  - ການປະສານງານດ້ານນະໂຍບາຍທີ່ຕໍ່ເນື່ອງ ລະຫວ່າງ ທະນາຄານ ແຫ່ງສປປ ລາວ ແລະ ກະຊວງການເງິນ ເພື່ອຮັບປະກັນຄວາມກົມກຽວ ໂດຍຜ່ານການລວມສູນບັນຊີລວມສູນຄັງເງິນແຫ່ງຊາດ.
- **ການສ້າງຄວາມເຂັ້ມແຂງ ໃຫ້ພາກເອກະຊົນ:**
  - ການເຊື່ອມຈອດດ້ານຂໍ້ມູນ, ການຫັນເປັນດີຈີຕອນ, ການປັບປຸງຜະລິດຕະພາບ ຂອງປັດໃຈການຜະລິດ ແລະ ທັກສະ ຂອງແຮງງານ.
  - ຮັບປະກັນການຈັດຕັ້ງປະຕິບັດຕາມເປົ້າໝາຍ SDG ແລະ ປັບປຸງປະສິດທິພາບ ຂອງການຊ່ວຍເຫຼືອຈາກຕ່າງປະເທດ.
  - ແກ້ໄຂກົດລະບຽບ ແລະ ເງື່ອນໄຂທາງການຄ້າ, ລວມທັງພາສີຂາເຂົ້າ, ຂໍ້ກີດກັ້ນທີ່ບໍ່ແມ່ນພາສີ ແລະ ການຢັ້ງຢືນການນຳໃຊ້ພະລັງງານສະອາດ ແລະ ອື່ນໆ.